# <u>ສິດຂອງທ່ານຢູ່ສານຈະລາຈອນ</u>

ທ່ານຖືກແຈ້ງຂໍ້ຫາໃນການລະເມີດ ກົດລະບຽບຈະລາຈອນ ຂອງ ລັດອີລີນອຍ. ເພາະສະນັ້ນ, ມັນເປັນສິ່ງທີ່ສຳຄັນທີ່ ທ່ານຈະຕ້ອງເຂົ້າໃຈ ກ່ຽວກັບ ສິດຂອງທ່ານ. ຜູ້ພິພາກສາ ຈະລົມກັບທ່ານເປັນສ່ວນບຸກຄົນ ກ່ຽວກັບ ຄະດີ ຂອງ ທ່ານ. ຖ້າທ່ານມີ ຄຳຖາມ ກ່ຽວກັບ ຂໍ້ຫາ, ໂທດທີ່ທ່ານຈະໄດ້ຮັບ ຫຼື ສິດ ຂອງ ທ່ານ ຕາມກົດໝາຍ, ໃຫ້ສອບຖາມຜູ້ພິພາກສາໄດ້ເລີຍ. ກ່ອນອື່ນໝົດ ໃຫ້ທ່ານເອກະສານສະບັບນີ້ ເພື່ອຊ່ວຍໃຫ້ທ່ານເຂົ້າໃຈຫຼາຍຂຶ້ນ ກ່ຽວກັບ ຂັ້ນຕອນ ຂອງ ສານຈະລາຈອນ ແລະ ເພື່ອຫຼຸດຜ່ອນເວລາທີ່ຢູ່ໃນຫ້ອງປະຊຸມສານ.

## <u>ກວດສອບໃຫ້ແນ່ໃຈວ່າທ່ານ ຢູ່ ຖືກສະຖານທີ່ ແລະ ຖືກເວລາ</u>

ໃຫ້ເບິ່ງຂ້າງລຸ່ມ ຂອງ ໃບສັ່ງ ມັນຈະມີກ່ອງສີ່ຫຼ່ຽມຂະໜາດໃຫຍ່ໜຶ່ງກ່ອງ ແລະ ຂ້າງໃນຈະມີຫ້ອງສີ່ຫຼ່ຽມນ້ອຍສອງຫ້ອງ ສຳລັບ ໝາຍໃສ່ ເຊິ່ງຈະບອກວ່າ ທ່ານຈະຕ້ອງໄປຂຶ້ນສານ ຫຼື ບໍ່. ຖ້າຫາກ ເຈົ້າໜ້າທີ່ໝາຍໃສ່ ຫ້ອງສີ່ຫຼ່ຽມ ທີ່ ຢູ່ ທາງຂ້າງ ຂໍ້ຄວາມ "ບໍ່ຈຳເປັນຕ້ອງໄປຂຶ້ນສານ (no court appearance required)", <u>ທ່ານຈະຕ້ອງບໍ່ໄປສານ ເວັ້ນເສຍແຕ່ວ່າ</u> ທ່ານໄດ້ສອບຖາມ ກັບ ຈ່າສານ ຂອງ ສານຈະລາຈອນແລ້ວວ່າທ່ານສາມາດໄປຂຶ້ນສານໄດ້. ຖ້າອີງຕາມໃບສັ່ງທີ່ທ່ານໄດ້ຮັບ, ທ່ານບໍ່ຈຳເປັນຕ້ອງໄປຂຶ້ນສານ ແລະ ທ່ານບໍ່ໄດ້ລົງທະບຽນ ຢູ່ ປ່ອງລົງທະບຽນ ຂອງ ຈ່າສານ ກ່ອນເຂົ້າຫ້ອງປະຊຸມສານ, ຜູ້ພິພາກສາ ຈະບໍ່ຮູ້ວ່າທ່ານໄດ້ມາທີ່ປະຊຸມສານ ແລະ ຜູ້ພິພາກສາ ຈະບໍ່ຮຽກຄະດີ ຂອງ ທ່ານ ມາຕັດສິນ.

## <u>ສິ່ງທີ່ຈະເກີດຂຶ້ນໃນຫ້ອງປະຊຸມສານ</u>

ຜູ້ພິພາກສາ ຈະຮຽກຊື່ ຂອງ ທ່ານ ແລະ ເລກທີຄະດີ ຂອງ ທ່ານ. ພາຍຫຼັງທີ່ ຜູ້ພິພາກສາ ຮຽກຄະດີ ຂອງ ທ່ານແລ້ວ, ໃຫ້ທ່ານກ້າວຂຶ້ນມາຢືນຢູ່ຕໍ່ໜ້າ ຜູ້ພິພາກສາ. ສິ່ງທຳອິດທີ່ຈະເກີດຂຶ້ນ ແມ່ນ ຜູ້ພິພາກສາ ຈະແຈ້ງຂໍ້ຫາ ພ້ອມທັງ ໂທດທີ່ທ່ານຈະໄດ້ຮັບ ຖ້າຫາກ ສານຕັດສິນວ່າທ່ານມີຄວາມຜິດ ຫຼື ທ່ານຍອມຮັບວ່າຜິດ. ດັ່ງນັ້ນ, ມັນຈຶ່ງເປັນສິ່ງທີ່ສຳຄັນທີ່ ທ່ານຈະຕ້ອງເຂົ້າໃຈ ຂໍ້ຫາ ແລະ ໂທດທີ່ທ່ານຈະໄດ້ຮັບ. ຖ້າທ່ານມີຂໍ້ສົງໄສໃດໆ ກ່ຽວກັບ <u>ຂໍ້ຫາ ຫຼື ໂທດທີ່ຈະໄດ້ຮັບ</u>, ໃຫ້ທ່ານສອບຖາມກັບ ຜູ້ພິພາກສາ ໃນເວລາດັ່ງກ່າວ.

## <u>ສິດໃນການມີທະນາຍຄວາມເປັນຜູ້ຕາງໜ້າ</u>

ພາຍຫຼັງທີ່ ຜູ້ພິພາກສາ ໄດ້ແຈ້ງ ຂໍ້ຫາ ແລະ ອະທິບາຍໂທດທີ່ທ່ານຈະໄດ້ຮັບແລ້ວ, ຜູ້ພິພາກສາ ຈະຖາມທ່ານວ່າ ທ່ານຕ້ອງການໃຫ້ມີ ທະນາຍຄວາມເປັນຜູ້ຕາງໜ້າທ່ານ ຫຼື ທ່ານຕ້ອງການຕາງໜ້າຕົນເອງໃນຊັ້ນສານ.

ຖ້າທ່ານຖືກແຈ້ງຂໍ້ຫາ ທີ່ພາໃຫ້ທ່ານ ຖືກຕັດອິດສະຫຼະພາບ, ທ່ານຈະມີສິດໃນການມີທະນາຍຄວາມເປັນຜູ້ຕາງໜ້າຢ່າງຕາຍຕົວ. ຖ້າທ່ານມີສະຖານະພາບທາງເສດຖະກິດ ທີ່ຢູ່ໃນ ກຸ່ມ "ຜູ້ມີຖານະການເງິນບໍ່ດີ," ເຊັ່ນ ບໍ່ມີລາຍໄດ້ ຫຼື ເງິນພຽງພໍ ໃນການວ່າຈ້າງ ທະນາຍຄວາມເອງ, ຜູ້ພິພາກສາ ຈະແຕ່ງຕັ້ງ ທະນາຍຄວາມ ເພື່ອຕາງໜ້າທ່ານ ຖ້າທ່ານຮ້ອງຂໍໃຫ້ມີ ທະນາຍຄວາມ. ຖ້າທ່ານຮ້ອງຂໍໃຫ້ ຜູ້ພິພາກສາ ແຕ່ງຕັ້ງ ທະນາຍຄວາມ, ທ່ານຈະຕ້ອງປະກອບ ແບບຟອມໃບຢັ້ງຢືນທາງດ້ານການເງິນ ພາຍໃຕ້ ຄຳສາບານ ເພື່ອທີ່ ຜູ້ພິພາກສາ ຈະສາມາດກຳນົດໄດ້ວ່າ ທ່ານມີເງື່ອນໄຂໄດ້ຮັບການຕາງໜ້າ ຈາກ ທະນາຍຄວາມ ທີ່ ຜູ້ພິພາກສາ ແຕ່ງຕັ້ງໃຫ້ ຫຼື ບໍ່. ຖ້າ ຜູ້ພິພາກສາ ແຕ່ງຕັ້ງ ທະນາຍຄວາມ ເພື່ອຕາງໜ້າທ່ານ, ທ່ານອາດຈະຕ້ອງໄດ້ຈ່າຍຄ່າທຳນຽມທີ່ສົມເຫດສົມຜົນ ໃຫ້ແກ່ ຫ້ອງວ່າການເມືອງແຊັມເປນ ສຳລັບ ການບໍລິການ ຂອງ ທະນາຍຄວາມດັ່ງກ່າວ. ຖ້າທ່ານບໍ່ຈ່າຍຄ່າທຳນຽມທີ່ກ່າວມານັ້ນ ຕາມ ຄຳສັ່ງ ຂອງ ສານ, ຈະຖືວ່າທ່ານບໍ່ເຄົາລົບອຳນາດ ຂອງ ສານ ແລະ ອາດຈະຖືກຕັດອິດສະຫຼະພາບ. ຖ້າທ່ານມີຂໍ້ສົງໄສ ກ່ຽວກັບ ສິດໃນການມີທະນາຍຄວາມຕາງໜ້າ, ໃຫ້ສອບຖາມ ຜູ້ພິພາກສາ ທັນທີ. ຖ້າທ່ານຕ້ອງການເວລາເພີ່ມຕື່ມໃນການວ່າຈ້າງ ທະນາຍຄວາມດ້ວຍຕົນເອງ, ຜູ້ພິພາກສາ ຈະໃຫ້ເວລາຕາມເໝາະສົມໃນການວ່າຈ້າງທະນາຍຄວາມ.

ຖ້າທ່ານຖືກແຈ້ງຂໍ້ຫາ ທີ່ບໍ່ມີໂທດຖືກຕັດອິດສະຫຼະພາບ ແຕ່ຖືກປັບໄໝເທົ່ານັ້ນ, ທ່ານຈະບໍ່ມີສິດໄດ້ຮັບການຕາງໜ້າ ໂດຍ ທະນາຍຄວາມ ທີ່ຖືກແຕ່ງຕັ້ງ ໂດຍ ຜູ້ພິພາກສາ. ທ່ານມີສິດມີທະນາຍຄວາມເປັນຜູ້ຕາງໜ້າ ແຕ່ທ່ານຈະຕ້ອງຈ້າງ ທະນາຍຄວາມດັ່ງກ່າວ ດ້ວຍຕົນເອງ. ຖ້າທ່ານບໍ່ຕ້ອງການ ທະນາຍຄວາມ, ທ່ານກໍ່ສິດຕາງໜ້າຕົນເອງໃນຊັ້ນສານ.

ຖ້າທ່ານຕ້ອງການປຶກສາ ກັບ ທະນາຍຄວາມ ກ່ອນທີ່ຈະລົງເລິກຄະດີ, ໃຫ້ທ່ານແຈ້ງ ຜູ້ພິພາກສາ ແລະ ຜູ້ພິພາກສາ ຈະໃຫ້ເວລາ ຢ່າງໜ້ອຍໜຶ່ງອາທິດ ໃນການປຶກສາ ກັບ ທະນາຍຄວາມ.

## ການສາລະພາບຜິດ ຫຼື ການໂຕ້ແຍ້ງວ່າບໍ່ຜິດ

ຖ້າທ່ານແຈ້ງກັບ ຜູ້ພິພາກສາ ວ່າທ່ານບໍ່ຕ້ອງການເວລາໃນການປຶກສາ ກັບ ທະນາຍຄວາມ ແລະ ທ່ານມີຈຸດປະສົງຕາງໜ້າຕົນເອງໃນຊັ້ນສານ, ຜູ້ພິພາກສາ ຈະຖາມທ່ານວ່າ ທ່ານຈະສາລະພາບຜິດ ຫຼື ໂຕ້ແຍ້ງວ່າບໍ່ຜິດ. ໂດຍການສາລະພາບຜິດ, ທ່ານໄດ້ສະຫຼະສິດໃນການໄຕ່ສວນຄະດີ ແລະ ຍອມຮັບເອົາໂທດທີ່ ສານໄດ້ແຈ້ງທ່ານ. ດັ່ງນັ້ນ, ມັນເປັນສິ່ງສຳຄັນທີ່ທ່ານຈະຕ້ອງເຂົ້າໃຈສິດຂອງທ່ານ ກ່ຽວກັບ ການໄຕ່ສວນຄະດີ.

## ສິດການໄດ້ຮັບການຕັດສິນຄະດີໂດຍຄະນະລູກຂຸນ

ທ່ານສາມາດສະຫຼະສິດການໄດ້ຮັບການຕັດສິນຄະດີໂດຍຄະນະລູກຂຸນ ແລະ ຍິນຍອມໃຫ້ ຜູ້ພິພາກສາ ເປັນຜູ້ພິຈາລະນາຕັດສິນຄະດີແຕ່ພຽງຜູ້ດຽວ ເຊິ່ງຂັ້ນຕອນດັ່ງກ່າວເອີ້ນວ່າ ການຕັດສິນຄະດີໂດຍບໍ່ມີຄະນະລູກຂຸນເຂົ້າຮ່ວມ. ຖ້າທ່ານຕ້ອງການໃຫ້ສານດຳເນີນການຕັດສິນຄະດີໂດຍບໍ່ມີຄະນະລູກຂຸນເຂົ້າ

ຮ່ວມ, ຈ່າສານ ຂອງ ສານຈະລາຈອນ ຈະຈັດຕາຕະລາງ ສໍາລັບ ການໄຕ່ສວນຄະດີ ແລະ ຈະແຈ້ງໃຫ້ທ່ານ ຊາບທາງໄປສະນີ ກ່ຽວກັບ ວັນທີ ແລະ ເວລາ ຂອງ ການໄຕ່ສວນຄະດີ.

ຖ້າທ່ານຖືກແຈ້ງຂໍ້ຫາ ທີ່ບໍ່ມີໂທດຖືກຕັດອິດສະຫຼະພາບ ແລະ ໃບສັ່ງ ກໍ່ບໍ່ໄດ້ກໍານົດໃຫ້ທ່ານຕ້ອງຂຶ້ນ ສານ, ທ່ານສາມາດຂໍໃຫ້ ຜູ້ພິພາກສາ ດໍາເນີນການພິຈາລະນາຕັດສິນຄະດີ ຢູ່ທີ່ ປ່ອງຈ່າສານ ນອກຫ້ອງ ປະຊຸມສານໄດ້ເລີຍ.

ຖ້າທີ່ຢູ່ ຂອງ ທ່ານມີການປ່ຽນແປງ, ທ່ານຈະຕ້ອງແຈ້ງໃຫ້ ຈ່າສານຮັບຊາບຢ່າງເປັນລາຍລັກອັກ ສອນ ກ່ຽວກັບ ທີ່ຢູ່ປະຈຸບັນ, ໂດຍຈະຕ້ອງລະບຸ ເລກທີຄະດີ ຂອງ ທ່ານ. ເຊິ່ງການແຈ້ງໃຫ້ຈ່າສານຮັບຊາບ ຈະຊ່ວຍຮັບປະກັນວ່າ ແຈ້ງການຈະຖືກສົ່ງໄປຫາ ທີ່ຢູ່ທີ່ຖືກຕ້ອງ ຂອງ ທ່ານ.

## <u>ສິດຂອງທ່ານຢູ່ທີ່ປະຊຸມສານ</u>

ບໍ່ວ່າທ່ານຈະເລືອກການໄຕ່ສວນຄະດີປະເພດໃດ, ທ່ານມີສິດດັ່ງຕໍ່ໄປນີ້ ຢູ່ ທີ່ປະຊຸມສານ: ພາລະ ແມ່ນຕົກ ຢູ່ທີ່ ໄອຍະການ ໃນການພິສູດວ່າ ທ່ານມີຄວາມຜິດ ໂດຍບໍ່ມີຂໍ້ສົງໄສໃດໆ,ໂດຍທີ່ທ່ານຈະບໍ່ມີພາ ລະໃນການພິສູດວ່າທ່ານເປັນ ຜູ້ບໍລິສຸດ

ທ່ານມີສິດເບິ່ງ ແລະ ຟັງ ພະຍານ ທີ່ໃຫ້ການໂຕ້ແຍ່ງທ່ານ ແລະ ທ່ານມີສິດຊັກຄ້ານພະຍານດັ່ງ ກ່າວ ນັ້ນກໍ່ຄື ການຖາມຄໍາຖາມທີ່ເໝາະສົມ ເພື່ອທົດສອບວ່າ ພະຍານດັ່ງກ່າວໃຫ້ການຢ່າງຖືກຕ້ອງ ແລະ ເປັນຈິງ ຫຼື ບໍ່.

ທ່ານມີສິດນໍາສະເໜີຫຼັກຖານ ແລະ ພະຍານເພື່ອຂຶ້ນໃຫ້ການ. ຖ້າທ່ານຮ້ອງຂໍຕໍ່ສານ, ສານຈະອອກ ໝາຍຮຽກ ຫຼື ຄໍາສັ່ງສານ ເພື່ອໃຫ້ ພະຍານດັ່ງກ່າວ ຂຶ້ນໃຫ້ການຕໍ່ສານ ໃນມື້ ແລະ ເວລາ ຂອງ ການປະຊຸມ ສານ.

ທ່ານມີສິດໃຫ້ການດ້ວຍຕົນເອງ ຖ້າທ່ານຕ້ອງການ. ເຖິງຢ່າງໃດກໍ່ຕາມ, ຖ້າທ່ານບໍ່ຕ້ອງການໃຫ້ ການ ຫຼື ຕອບຄໍາຖາມໃດໆ ກ່ຽວກັບ ເຫດການທີ່ເກີດຂຶ້ນ, ບໍ່ມີໃຜສາມາດບັງຄັບໃຫ້ທ່ານຕອບຄໍາຖາມໄດ້ ແລະ ຜູ້ພິພາກສາ ຫຼື ຄະນະລູກຂຸນ ຈະບໍ່ຖືວ່າທ່ານມີຄວາມຜິດ ເນື່ອງຈາກວ່າ ທ່ານບໍ່ຕ້ອງການໃຫ້ການ.

## <u>ສິດຂອງທ່ານ ພາຍຫຼັງ ທີ່ທ່ານສາລະພາບຜິດ</u>

ຖ້າທ່ານຕ້ອງການສະຫຼະສິດທັງໝົດທີ່ໄດ້ກ່າວມາຂ້າງເທິງ ແລະ ສາລະພາບຜິດໃນຂໍ້ຫາ ທີ່ມີໂທດ ຖືກ ປັບໄໝເທົ່ານັ້ນ, ທ່ານສາມາດສະຫຼະສິດໄດ້, ໂດຍທີ່ ສານຈະດໍາເນີນການປະຊຸມສານທັນທີ ເພື່ອກໍາ ນົດຈໍານວນຄ່າປັບໄໝທີ່ທ່ານຕ້ອງຈ່າຍ. ນອກຈາກຄ່າປັບໄໝ, <u>ທ່ານຈະຕ້ອງຈ່າຍຄ່າທໍານຽມສານ</u>.

ຜູ້ພິພາກສາ ອາດຈະຖາມທ່ານ ກ່ຽວກັບ ການກະທຳຜິດ ແລະ ປະຫວັດການຂັບຂີ່. ສານອາດຈະຖາມ ພາກສ່ວນເຈົ້າໜ້າ ທີ່ລັດຖະບານ ເພື່ອ ກຳນົດຈຳນວນຄ່າປັບໄໝ.

ຖ້າເໝາະສົມ, ທ່ານມີສິດຂໍໃຫ້ ຜູ້ພິພາກສາ ອອກຄຳສັ່ງຄວບຄຸມການປະພຶດ. ຖ້າສານອອກຄຳສັ່ງ ການຄວບຄຸມການປະພຶດ ແລະ ທ່ານໄດ້ປະຕິບັດ ຕາມ ຄຳສັ່ງດັ່ງກ່າວຢ່າງຄົບຖ້ວນ, ໃບສັ່ງ ຈະບໍ່ຖືກບັນ ທຶກໄວ້ໃນ ປະຫວັດການຂັບຂີ່ຂອງທ່ານ. ຖ້າສານອອກຄຳສັ່ງຄວບຄຸມການປະພຶດ, ສານຈະໃຫ້ເວລາໃນ ການຈ່າຍຄ່າປັບໄໝ ແລະ ຄ່າທຳນຽມສານ. <u>ຖ້າທ່ານບໍ່ຈ່າຍຄ່າປັບໄໝ ແລະ ຄ່າທຳນຽມສານ ພາຍໃນ ເວລາທີ່ສານກຳນົດ</u>, ຫຼື ຖ້າທ່ານໄດ້ຮັບໃບສັ່ງອື່ນຕື່ມອີກ, ສານຈະຍົກເລີກຄຳສັ່ງຄວບຄຸມການປະພຶດ ແລະ ຕັດສິນວ່າ ທ່ານລະເມີດກົດລະບຽບຈະລາຈອນ ໃນຂະນະທີ່ພາຫະນະເຄື່ອນທີ່ (moving violation) ແລະ ບັນທຶກໄວ້ໃນປະຫວັດການຂັບຂີ່ຂອງທ່ານ.

ຖ້າ ໃບສັ່ງທີ່ທ່ານໄດ້ຮັບ ບໍ່ໄດ້ກຳນົດໃຫ້ ທ່ານຕ້ອງໄປຂຶ້ນສານ ແລະ ທ່ານບໍ່ໄດ້ຖືກຂໍ້ຫາ ຂັບລົດໄວ 20 ໄມ ຕໍ່ ຊົ່ວໂມງ ເກີນຄວາມໄວທີ່ກຳນົດຢູ່ປ້າຍ, ທາງເລືອກທີ່ງ່າຍທີ່ສຸດໃນການຄວບຄຸມການປະພຶດ (ຖ້າ ທ່ານ ມີເງື່ອນໄຂ) ແມ່ນການເຂົ້າຮຽນ ຫຼັກສູດການຂັບຂີ່ປອດໄພ. ເພື່ອກຳນົດວ່າ ທ່ານມີເງື່ອນໄຂເຂົ້າຮຽນ ຫຼັກສູດດັ່ງກ່າວ, ທ່ານສາມາດປະກອບແບບຟອມ ຂອງ ຫ້ອງການສານຂັ້ນຕົ້ນ ທີ່ລະບຸ ເງື່ອນໄຂຕ່າງໆ ສຳລັບ ການ ເຂົ້າຮຽນຫຼັກສູດດັ່ງກ່າວ.

## <u>ສິດຂອງທ່ານໃນການຂໍອຸທອນ</u>

ທ່ານມີສິດຂໍຖອນ ໜັງສືສາລະພາບຜິດ ຂອງ ທ່ານ ພາຍໃນ 30 ວັນ ນັບແຕ່ມື້ທີ່ຍື່ນໜັງສືສະບັບດັ່ງ ກ່າວເປັນຕົ້ນໄປ. ສຳລັບ ການຂໍເພີກຖອນດັ່ງກ່າວ, ທ່ານຈະຕ້ອງເຮັດຂຶ້ນຢ່າງເປັນລາຍລັກອັກສອນ ແລະ ລະບຸເຫດ ຜົນທັງໝົດ. ເຫດຜົນທີ່ບໍ່ໄດ້ລະບຸໄວ້ໃນ ຄຳຮ້ອງຂໍເພີກຖອນ ຈະບໍ່ສາມາດນຳໃຊ້ ສຳລັບ ການອຸທອນໄດ້. ຖ້າທ່ານໄດ້ຮັບອະນຸຍາດໃຫ້ຖອນສາລະພາບຜິດ, ໃບສັ່ງຕ່າງໆທີ່ຖືກຍົກເລີກ ຈະກັບມາ ມີຜົນບັງຄັບໃຊ້ ເໝືອນເດີມ. ຖ້າທ່ານບໍ່ຍື່ນໃບຄຳຮ້ອງ ຫຼື ສະເໜີໃຫ້ມີການກວດສອບຄຳຕັດສິນ ຂອງ ສານຂັ້ນຕົ້ນ ພາຍໃນ 30 ວັນ ນັບແຕ່ມື້ທີ່ທ່ານຂຶ້ນສານເປັນຕົ້ນໄປ, ທ່ານຈະເສຍສິດໃນການຂໍອຸທອນ.

## <u>ການສະຫຼະສິດ ແລະ ການສາລະພາບຜິດ</u>

ຖ້າທ່ານຕ້ອງການສາລະພາບຜິດ, ໃຫ້ເຊັນໃສ່ຂ້າງລຸ່ມນີ້.

ຂ້າພະເຈົ້າ ໄດ້ອ່ານ ແລະ ເຂົ້າໃຈ ສິດທັງໝົດ ຂອງ ຂ້າພະເຈົ້າ ເຊິ່ງລວມມີ ສິດໃນການມີທະນາຍຄວາມ ຕາງໜ້າ, ສິດໄດ້ຮັບການໄຕ່ສວນ ຈາກ ຜູ້ພິພາກສາ ໂດຍບໍ່ມີຄະນະລູກຂຸນເຂົ້າຮ່ວມ, ແລະ ຂ້າພະເຈົ້າ ມີ ຈຸດປະສົງຂໍສະຫຼະສິດດັ່ງກ່າວ ຍົກເວັ້ນ ສິດໃນການຂໍອຸທອນ. ຂ້າພະເຈົ້າ ສາລະພາບຜິດດ້ວຍຄວາມສະ ໝັກໃຈ ໂດຍປາດສະຈາກ ການບັງຄັບ, ການຂົ່ມຂູ່ ຫຼື ການຊັກຈູງ ຈາກ ບຸກຄົນໃດ.

ຂໍ້ຫາ:________________________________________

ຄ່າປັບໄໝ:______________________________ໂດລາ ລວມກັບ ຄ່າທຳນຽມສານ

(ຜູ້ພິພາກສາ ຈະເປັນຜູ້ຕື່ມຈຳນວນຄ່າປັບໄໝ)

__________________________

ລາຍເຊັນ ຂອງ ຈຳເລີຍ

__________________________

ລົງວັນທີ